K

# ຄຳແນະນຳ ໃນການຂຽນໃບຄຳຮ້ອງຂັ້ນອະນຸບານ ສົກສຶກສາ 2007-2008

ຈົ່ງໃຊ້ໃບຄຳຮ້ອງຂັ້ນອະນຸບານ ເພື່ອຮ້ອງຂໍເອົາ ໂຮງຮຽນຕາມການເລືອກຂອງທ່ານ ສຳຫລັບສົກສຶກສາ 2007-2008 ນີ້. ສຳຫລັບເລື້ອງຂ່າວເພີ່ມເຕີມອີກນັ້ນ ກະລຸນາເບິ່ງເອົາຄຳປຶກສາກັບ ໜັງສືຄູ່ມືໃນການຈົດຊື່ເຂົ້າຮຽນ ສຳຫລັບພໍ່ແມ່ ສົກ 2007-2008 ຫລື ໄປຫາສູກາງຈົດຊື່ແຫ່ງໃດແຫ່ງໜຶ່ງກໍໄດ້.

**ພາກສ່ວນທີ 1** – ຈົ່ງຂຽນ ທີ່ຢູ່ໃສ່ຕາມບ່ອນທີ່ເດັກຂອງທ່ານອາໃສຢູ່ (ທີ່ຢູ່ບ້ານ). ຖ້າເດັກທ່ານຫາກອາໃສຢູ່ ຫລາຍກວ່າ ໜຶ່ງບ້ານແລ້ວ ໃຫ້ຂຽນທີ່ຢູ່ອັນເປັນບ່ອນສຳຄັນຂອງເຂົາໃສ່.

**ພາກສ່ວນທີ 2** – ໃຊ້ໃບຄຳຮ້ອງອັນນີ້ ສຳຫລັບຂັ້ນອະນຸບານ ເທົ່ານັ້ນ

**ພາກສ່ວນທີ 3 (ຕາມໃຈຊອບ)** – ຈົ່ງຂຽນໃສ່ພາກສ່ວນນີ້ໃຫ້ຄົບຖ້ວນດີເທົ່ານັ້ນ ຖ້າທ່ານມັກຢາກໃຫ້ໃຊ້ ທີ່ຢູ່ບ່ອນຝາກເດັກ ແທນທີ່ຈະໃຊ້ ທີ່ຢູ່ບ້ານນັ້ນ ເພື່ອຕັດສິນໃຫ້ໄດ້ຮັບສິດໃນການຂີ່ລົດຮັບສົ່ງ. ທີ່ຢູ່ຝາກເດັກກໍໄດ້ຮັບການພິຈາລະນາເປັນ "ທີ່ຢູ່ບໍລິການ" ແລະ ເອົາໃຊ້ສະເພາະກັບ ການຕັດສິນໃນການໃຫ້ລົດຮັບສົ່ງເທົ່ານັ້ນ ແລະ ການສັບຊ້ອນຕາມກົດໝາຍເທົ່ານັ້ນ. ທີ່ຢູ່ບ່ອນຝາກເດັກ **ບໍ່** ໄດ້ເອົາໃຊ້ ເພື່ອຕັດສິນ ໃຫ້ສິດກ່ອນໝູ່ຂອງການສັບຊ້ອນເລີຍ. ຄວາມໄດ້ຮັບສິດກ່ອນໝູ່ຂອງການສັບຊ້ອນ ແມ່ນອີງໃສ່ທີ່ຢູ່ບ້ານເທົ່ານັ້ນ.

**ພາກສ່ວນທີ 4 (ຕາມໃຈຊອບ)** – ຈົ່ງຂຽນພາກສ່ວນນີ້ ຖ້າທ່ານຕ້ອງການໃຫ້ເດັກຂອງທ່ານເຂົ້າຢູ່ ໂຮງຮຽນບ່ອນດຽວກັບເດັກຜູ້ອື່ນ ທີ່ຢູ່ໃນຄອບຄົວດຽວກັນນີ້ເຂົ້າຢູ່. ເພື່ອໃຫ້ໄດ້ຕາມສິດໄດ້ກ່ອນໝູ່ ສຳຫລັບໂຮງຮຽນບ່ອນໜຶ່ງ ນັກຮຽນຕ້ອງອາໃສຢູ່ໃນຄອບຄົວດຽວກັນ ແລະ <u>ມີທີ່ຢູ່ບ້ານອັນດຽວກັນ</u> ກັບຜູ້ເປັນພີ່ນ້ອງກັນ ກັບເຂົານີ້. ແມ່ນຄວາມຮັບຜິດຊອບຂອງທ່ານເອງ ທີ່ຮັບປະກັນໃຫ້ ທີ່ຢູ່ບ້ານ ມີຢູ່ໃນບັນທຶກ ສຳຫລັບຜູ້ເປັນພີ່ນ້ອງກັນນີ້ ຕາມທີ່ທ່ານຂຽນລາຍການລົງໃນພາກສ່ວນນີ້ ໃຫ້ເປັນອັນດຽວກັບທີ່ໄດ້ເອົາໃຫ້ ຢູ່ໃນພາກສ່ວນທີ 1. ມີທີ່ຢູ່ບໍ່ຈະແຈ້ງ ອາດເປັນຜົນກີດກັ້ນ ໃຫ້ເດັກຂອງທ່ານບໍ່ໄດ້ຮັບຕາມສິດທີຄວນໄດ້ກ່ອນຂອງການມີພີ່ນ້ອງ ໃນໂຮງຮຽນນັ້ນ. ຍິ່ງໄປກວ່ານັ້ນ ຜູ້ເປັນພີ່ນ້ອງກັນນີ້ ຕ້ອງໄດ້ຖືກສັບຊ້ອນເຂົ້າໂຮງຮຽນບ່ອນນັ້ນ <u>ໃນສົກສຶກສາ 2007-2008</u> ນີ້. ການມີສິດທີໄດ້ກ່ອນ ຂອງຄວາມເປັນພີ່ນ້ອງກັນນີ້ ບໍ່ໄດ້ເປັນປະໂຍດແກ່ ນັກຮຽນໃດ ຖ້າຫາກພີ່ນ້ອງຂອງເຂົາ ບໍ່ໄດ້ຖືກສັບຊ້ອນເຂົ້າ ໃນໂຮງຮຽນນັ້ນ ໃນປີໜ້າ.

**ພາກສ່ວນທີ 5** – ຈົ່ງໃຊ້ **ແຜ່ນເຈ້ຍໃຫ້ຂຽນເລືອກເອົາຂັ້ນອະນຸບານນີ້** (ເຈ້ຍໃຫ້ຂຽນລອງເບິ່ງ) ທີ່ອຳນວຍໃຫ້ ຢູ່ທາງດ້ານຫລັງຂອງຄຳແນະນຳນີ້ ເພື່ອຊ່ວຍທ່ານຂຽນລົງໃນພາກສ່ວນທີ 5. ໂຮງຮຽນທີ່ຢູ່ຕາມເຈ້ຍໃຫ້ຂຽນລອງເບິ່ງນີ້ ແມ່ນໄດ້ຂຽນເປັນລາຍການ ລຽງຕາມຕົວພະຍັນຊະນະ ໂດຍຄຸ້ມໂຮງຮຽນແລ້ວ. ໂຮງຮຽນທີ່ ໃຫ້ລົດຮັບສົ່ງ ແລະ / ຫລື ສິດໄດ້ກ່ອນໝູ່ຂອງການສັບຊ້ອນ ແກ່ຫລາຍກວ່າໜຶ່ງຄຸ້ມໂຮງຮຽນ ແມ່ນໄດ້ຂຽນລົງ ພາຍໃນຄຸ້ມໂຮງຮຽນທີ່ໃຊ້ການໄດ້ກັບ "ນອກຄຸ້ມໂຮງຮຽນ." ໂຮງຮຽນທີ່ໃຊ້ແທນກັນໄດ້ / ບໍ່ແມ່ນໂຮງຮຽນຣັຖ ກໍໄດ້ຂຽນເປັນລາຍການລົງ ດ້ວຍ *ຕົວໜັງສືອຽງ ຫລື ບໍ່ຕັ້ງ* ນັ້ນແລ້ວ, ແລະຈຳພວກທີ່ເອົາໃຫ້ ແບບສັບຊ້ອນ ແລະ ລົດຮັບສົ່ງກວ້າງຂວາງທົ່ວເມືອງ ແມ່ນໄດ້ຂຽນລົງ ຢູ່ທາງລຸ່ມຂອງເຈ້ຍໃຫ້ຂຽນລອງເບິ່ງນັ້ນແລ້ວ. ໂຮງຮຽນທຸກແຫ່ງທີ່ໄດ້ ຂຽນລົງນີ້ ອຳນວຍໃຫ້ມີໂຄງການຂັ້ນອະນຸບານປົກກະຕິແບບເຕັມມື້; ມີໃຫ້ແບບເຄິ່ງມື້ ແມ່ນໄດ້ຂຽນລົງແຍກກັນຕ່າງຫາກ.

ຕາມເຈ້ຍໃຫ້ຂຽນລອງເບິ່ງນີ້ ຈົ່ງຂຽນຕົວເລກຕາມການເລືອກເອົາໂຮງຮຽນຂອງທ່ານ (ແຕ່ 1 ເຖິງ 10 ) ຕາມລຳດັບທີ່ທ່ານມັກຫລາຍກວ່າໝູ່ ໂດຍເລີ່ມຈາກເລກ "1" ສຳຫລັບການເລືອກເອົາອັນທີໜຶ່ງຂອງທ່ານ. ທ່ານອາດເລືອກເອົາໂຮງຮຽນໃດໆ ທີ່8ຍນລົງເປັນລາຍການນີ້ ອັນໃດກໍໄດ້, ແຕ່ເດັກຂອງທ່ານ ອາດບໍ່ໄດ້ຮັບສິດ ສຳຫລັບລົດຮັບສົ່ງ ຖ້າທ່ານຫາກເລືອກເອົາ ໂຮງຮຽນທີ່ບໍ່ຢູ່ໃນຄຸ້ມໂຮງຮຽນຂອງທ່ານນີ້.

ຈົ່ງໃຊ້ເຈ້ຍທີ່ໄດ້ຂຽນແລ້ວນັ້ນ ເພື່ອຂຽນລົງ <u>ຢ່າງໜ້ອຍສາມ</u> ໂຮງຮຽນ ແລະ ໂຄງການ. ເລີ່ມຕົ້ນດ້ວຍການເລືອກອັນທີໜຶ່ງຂອງທ່ານ ແລະ ຂຽນລົງ ດ້ວຍຕົວເລກໝາຍປະຈຳໂຮງຮຽນ ສຳຫລັບການເລືອກແຕ່ລະອັນນັ້ນ. ຖ້າທ່ານຂໍຮ້ອງເອົາເຄິ່ງມື້ ຫລື ໂຄງການ Montessori ແລ້ວ ຈົ່ງຂຽນລົງໃສ່ໃນ box ໂຄງການໃຫ້ເລືອກທີ່ເໝາະສົມນັ້ນ; ປ່ອຍປະໄວ້ ເປົ່າວ່າງ box ໂຄງການໃຫ້ເລືອກນັ້ນ ຖ້າທ່ານກຳລັງຂໍຮ້ອງເອົາໂຄງການອະນຸບານປົກກະຕິແບບເຕັມມື້; ການເລືອກອັນທີສອງແມ່ນ ອະນຸບານເຄິ່ງມື້ Laurelhurst , ແລະ ການເລືອກ ອັນທີສາມແມ່ນອະນຸບານແບບເຕັມມື້ AE #2 :

| | School Number | | | School Name | Optional Program: Mon-tessori | Half Day | Dual Lang. |
|---|---|---|---|---|---|---|---|
| 1 | 2 | 4 | 2 | Laurelhurst | ○ | ○ | ○ |
| 2 | 2 | 4 | 2 | Laurelhurst | ○ | ● | ○ |
| 3 | 9 | 7 | 7 | AE#2 | ○ | ○ | ○ |

**ພາກສ່ວນທີ 6 (ຕາມໃຈຊອບ)** – ເດັກຂອງທ່ານຈະໄດ້ຖືກເອົາໃສ່ໄວ້ ໃນລາຍຊື່ລໍຖ້າ ສຳຫລັບການເລືອກເອົາໂຮງຮຽນຂອງທ່ານອັນທີໜຶ່ງ ຖ້າເຂົາຫາກບໍ່ໄດ້ສັບຊ້ອນເຂົ້າໃນໂຮງຮຽນນັ້ນ. ຖ້າທ່ານຢາກຈະໃຫ້ເດັກຂອງທ່ານ ມີຊື່ຢູ່ໃນລາຍຊື່ລໍຖ້າ ສຳຫລັບໂຮງຮຽນ ນອກເໜືອຈາກການເລືອກເອົາອັນທີໜຶ່ງຂອງທ່ານແລ້ວ ຈົ່ງໝາຍໃສ່ box ຢູ່ໃນພາກສ່ວນທີ 6 ແລະ ຂຽນຊື່ຂອງໂຮງຮຽນລໍຖ້າທີ່ທ່ານມັກກ່ອນໝູ່ໃສ່; ທ່ານອາດເລືອກເອົາ ຕາມການເລືອກຂອງທ່ານໃດໆກໍໄດ້ ຈາກພາກສ່ວນທີ 5. ເດັກຂອງທ່ານກໍຈະຖືກຂຽນໄວ້ຢູ່ ໃນລາຍຊື່ໂຮງຮຽນລໍຖ້າ ທີ່ທ່ານມັກຫລາຍກວ່າໝູ່ເທົ່ານັ້ນ ຖ້າເຂົາຫາກ ໄດ້ຖືກສັບຊ້ອນເຂົ້າຢູ່ໂຮງຮຽນ ທີ່ໄດ້ໝາຍເອົາ ຕາມອັນດັບທີ່ຕ່ຳສຸດ ຢູ່ໃນໃບຄຳຮ້ອງ ກວ່າຢູ່ໃນລາຍຊື່ໂຮງຮຽນລໍຖ້ານັ້ນ. ບໍ່ດັ່ງນັ້ນ ໂຮງຮຽນລໍຖ້າ ກໍຈະ <u>ໝົດສິດລົງທີ່ການເລືອເອົາໂຮງຮຽນອັນທີໜຶ່ງຂອງທ່ານ</u> . ເດັກຂອງທ່ານ ກໍອາດຈະມີຢູ່ແຕ່ລາຍຊື່ໂຮງຮຽນລໍຖ້າ ເທົ່ານັ້ນ.

**ພາກສ່ວນທີ 7 (ຕາມໃຈຊອບ)** – ຈົ່ງໝາຍເອົາບ່ອນນີ້ ເທົ່ານັ້ນ ຖ້າເດັກຂອງທ່ານຫາກກຳລັງເຂົ້າຮຽນຢູ່ <u>ປັດຈຸບັນນີ້</u> ໃນໂຮງຮຽນ <u>ທີ່ຢູ່ນອກ</u> ຄຸ້ມໂຮງຮຽນແຖວບ້ານທ່ານ, ທ່ານຢາກໃຫ້ເຂົາ ສືບຕໍ່ເຂົ້າໃນໂຮງຮຽນນັ້ນ ຖ້າວ່າ ບໍ່ມີບ່ອນໃດຢູ່ໃນການເລືອກຂອງທ່ານ ໃນພາກສ່ວນທີ ຫ້ານີ້ ບໍ່ມີໃຫ້ເລີຍ. ກະລຸນາຂຽນໃສ່ ຊື່ໂຮງຮຽນປັດຈຸບັນຂອງເດັກທ່ານ ເພື່ອການພິສູດເບິ່ງ.